# ກອງປະຊຸມປັບປຸງແຜນຍຸດທະສາດ ການປະກັນຄຸນນະພາບການສຶກສາ

ການສະເຫນີ
ກ່ຽວກັບ

**ມາດຖານຄຸນນະພາບການສຶກສາ ສໍາລັບ ການສຶກສາຊັ້ນສູງ**

ທີ່ກະຊວງສຶກສາທິການ, ວັນທີ 05/05/2009
ໂດຍ: ສູນຮັບປະກັນຄຸນນະພາບ

# ມາດຖານຄຸນນະພາບການສຶກສາຊັ້ນສູງ

- ແມ່ນຫຍັງ? ໃຊ້ເຮັດຫຍັງ?
- ໃຊ້ຢູ່ໃສ?
- ເວລາໃດ?
- ໃຜກໍານົດ? ໃຜໃຊ້?
- ກໍານົດແນວໃດ? ໃຊ້ແນວໃດ?

# ປັດໃຈຕໍ່ຄຸນນະພາບການສຶກສາຊັ້ນສູງ

**ປັດສະຍາ**

ຈຸດຫມາຍກໍ່ສ້າງ

**ວັດຖຸດິບ**

- ຜູ້ເສັງເຂົ້າ
- ງົບປະມານ

**ເງື່ອນໄຂ ສະຫນອງ**

- ນັກຮຽນ
- ຄູອາຈານ - ພະນັກງານ
- ຫລັກສູດ
- ຫ້ອງສະຫມຸດ / ຫ້ອງທົດລອງ
- ສະຖານທີ່

**ຂະບວນ ການ**

- ການພົວພັນກັບສັງຄົມ / ສາກົນ
- ການຄົ້ນຄວ້າວິທະຍາສາດ
- ການບໍລິການວິຊາການ
- ການບໍລິຫານ / ການຄຸ້ມຄອງ
- ການພັດທະນາບຸກຄະລາກອນ
- ການປະກັນຄຸນນະພາບພາຍໃນ

**ຜົນຜະລິດ**

- ຜູ້ຮຽນຈົບ
- ຜົນງານ ຄົ້ນຄວ້າວິທະຍາສາດ
- ການປະກອບສ່ວນ ໃຫ້ແກ່ສັງຄົມອື່ນໆ

# ມາດຖານຄຸນນະພາບຂອງຫວຽດນາມ

- ມີຢູ່10ມາດຖານ

1. ພາລະບົດບາດ ແລະຈຸດໝາຍກໍ່ສ້າງ
2. ການຈັດຕັ້ງ ແລະ ການຄຸ້ມຄອງ
3. ຫລັກສູດການສຶກສາ
4. ການເຄື່ອນໄຫວກໍ່ສ້າງ
5. ຖັນແຖວຄະນະບໍລິຫານ, ອາຈານສອນ ແລະພະນັກງານ
6. ຜູ້ຮຽນ
7. ຄົ້ນຄວ້າວິທະຍາສາດ, ນຳໃຊ້ ແລະຖ່າຍທອດເຕັກນິກ
8. ການພົວພັນສາກົນ
9. ຫ້ອງສະໝຸດ, ອຸປະກອນການຮຽນການສອນ ແລະພື້ນຖານອື່ນໆ
10. ງົບປະມານ ແລະການຄຸ້ມຄອງງົບປະມານ

# ມາດຖານຄຸນນະພາບຂອງຍີ່ປຸ່ນ

- ມີຂອບເຂດການປະເມີນດັ່ງມາດຖານລຸ່ມນີ້

1. ດ້ານປັດສະຍາ ແລະຈຸດມຸ່ງໝາຍຂອງການສຶກສາ
2. ດ້ານກິດຈະກຳການສຶກສາ
3. ດ້ານກິດຈະກຳການວິໄຈ
4. ດ້ານຜູ້ສອນ
5. ດ້ານອາຄານສະຖານທີ່ ແລະອຸປະກອນການສອນ
6. ດ້ານການແລກປ່ຽນກັບຕ່າງປະເທດ
7. ດ້ານການຮ່ວມມືກັບພາກອຸດສາຫະກຳແລະຊຸມຊົນ
8. ດ້ານການບໍລິຫານແລະຈັດການທາງການເງິນ
9. ດ້ານລະບົບຕ່າງໆ ໃນການປະເມີນຕົນເອງ

# ມາດຖານຄຸນນະພາບຂອງໄທ(ພາຍໃນ)

- ມີຢູ່9ມາດຖານ
  1. ດ້ານປັດສະຍາ, ພັນທະໜ້າທີ່, ຈຸດປະສົງ ແລະ ແຜນ
  2. ດ້ານການຮຽນການສອນ
  3. ດ້ານການພັດທະນານັກສຶກສາ/ກິດຈະກຳພັດທະນານັກສຶກສາ
  4. ດ້ານການວິໄຈ
  5. ດ້ານການບໍລິການວິຊາການສູ່ທ້ອງຖິ່ນ ແລະສັງຄົມ
  6. ດ້ານການບຳລຸງຮັກສາ ສິລະປະວັດທະນະທຳ
  7. ດ້ານການບໍລິຫານຈັດການ
  8. ດ້ານການເງິນ ແລະງົບປະມານ
  9. ດ້ານການປະກັນຄຸນນະພາບ

# ມາດຖານຄຸນນະພາບຂອງໄທ(ພາຍນອກ)

- ມີຢູ່8ມາດຖານ

1. ດ້ານຄຸນນະພາບຜູ້ຮຽນຈົບ
2. ດ້ານການຮຽນຮູ້
3. ດ້ານການສະໜັບສະໜູນການຮຽນຮູ້
4. ດ້ານງານວິໄຈ ແລະງານສ້າງສັນ
5. ດ້ານການບໍລິການວິຊາການ
6. ດ້ານການບຳລຸງຮັກສາ ສິລະປະ ແລະ ວັດທະນະທຳ
7. ດ້ານການບໍລິການຈັດການ
8. ດ້ານລະບົບປະກັນຄຸນນະພາບພາຍໃນ

# ມາດຖານຄຸນນະພາບຂອງລາວ (1)

- ສະເຫນີໃຫ້ມີ10ມາດຖານ

1. ພາລະບົດບາດ ແລະຈຸດຫມາຍກໍ່ສ້າງຂອງສະຖານສຶກສາ
2. ການຈັດຕັ້ງ ແລະ ການຄຸ້ມຄອງ
3. ຫລັກສູດການສຶກສາ
4. ການເຄື່ອນໄຫວການສຶກສາ ແລະ ຂະບວນການຮຽນການສອນ
5. ຊັບພະຍາກອນມະນຸດ: ຜູ້ບໍລິຫານ, ຄູອາຈານສອນ ແລະພະນັກງານ
6. ຜູ້ຮຽນ ແລະກິດຈະກໍາພັດທະນາຜູ້ຮຽນ
7. ການຄົ້ນຄວ້າວິທະຍາສາດ ແລະການບໍລິການວິຊາການແກ່ສັງຄົມ
8. ເງື່ອນໄຂສະຫນອງໃຫ້ການຮຽນການສອນ
9. ງົບປະມານ ແລະການຄຸ້ມຄອງງົບປະມານ
10. ລະບົບ ແລະກົນໄກການປະກັນຄຸນະພາບພາຍໃນ

# ມາດຖານຄຸນນະພາບຂອງລາວ (2)

ພາລະບົດບາດ ແລະ ຈຸດໝາຍ

ການຈັດຕັ້ງ - ຄຸ້ມຄອງ

ເງື່ອນໄຂສະໜອງ
ການຮຽນການສອນ

ຊັບພະຍາກອນມະນຸດ

ງົບປະມານ ແລະ
ການຄຸ້ມຄອງງົບປະມານ

ຫລັກສູດການສຶກສາ

ການຄົ້ນຄວ້າວິທະຍາສາດ
ແລະ
ການບໍລິການວິຊາການ

ການເຄື່ອນໄຫວການສຶກສາ

ຜູ້ຮຽນ ແລະກິດຈະກຳພັດທະນາຜູ້ຮຽນ
(ຜົນຜະລິດ)

ລະບົບ ແລະກົນໄກການປະກັນຄຸນນະພາບ

# ມາດຖານຄຸນນະພາບຂອງລາວ (3)

- ພາລະບົດບາດ ແລະຈຸດຫມາຍກໍ່ສ້າງ

1. ພາລະບົດບາດຂອງສະຖາບັນການສຶກສາຊັ້ນສູງ ໄດ້ຖືກກຳນົດ, ໄດ້ປະກາດໃຊ້ຢ່າງເປັນທາງການ, ມີເນື້ອໃນຈະແຈ້ງ, ເຫມາະສົມກັບ ບົດບາດຫນ້າທີ່, ແທດເຫມາະກັບທ່າແຮງ ແລະ ທິດທາງພັດທະນາ ຂອງສະຖາບັນການສຶກສາ, ແທດເຫມາະກັບຄວາມຮຽກຮ້ອງຕ້ອງການ ດ້ານຊັບພະຍາກອນມະນຸດ ຂອງທ້ອງຖິ່ນ ແລະ ຂະແຫນງການ.
2. ຈຸດຫມາຍກໍ່ສ້າງຂອງສະຖາບັນການສຶກສາ ຕ້ອງແທດເຫມາະກັບຈຸດຫມາຍການກໍ່ສ້າງຂອງການສຶກສາຊັ້ນສູງ ຕາມກົດຫມາຍວ່າດ້ວຍການສຶກສາ ແລະສອດຄ່ອງກັບພາລະຫນ້າທີ່ຂອງສະຖາບັນການສຶກສາ ທີ່ໄດ້ປະກາດໄວ້; ມີການກວດກາ, ເພີ່ມເຕີມ, ປັບປຸງ ແລະມີການຜັນຂະຫຍາຍຈັດຕັ້ງປະຕິບັດຕາມໄລຍະ ເວລາກຳນົດ.

ຕົວຢ່າງບາງມາດຖານ

# ມາດຖານຄຸນນະພາບຂອງລາວ (4)

- ພາລະບົດບາດ ແລະຈຸດໝາຍກໍ່ສ້າງ

1. ພາລະບົດບາດຂອງສະຖາບັນການສຶກສາວິຊາຊີບຊັ້ນສູງ ໄດ້ຖືກກຳນົດ, ໄດ້ປະກາດໃຊ້ຢ່າງເປັນທາງການ, ມີເນື້ອໃນຈະແຈ້ງ, ເໝາະສົມກັບບົດບາດໜ້າທີ່, ແທດເໝາະກັບທ່າແຮງ ແລະ ທິດທາງພັດທະນາ ຂອງ ສະຖາບັນການສຶກສາ, ແທດເໝາະກັບຄວາມຮຽກຮ້ອງ ຕ້ອງການດ້ານຊັບພະຍາກອນມະນຸດ ຂອງທ້ອງຖິ່ນ ແລະ ຂະແໜງການ.
   - ພາລະບົດບາດຂອງສະຖາບັນການສຶກສາໄດ້ຖືກກຳນົດເປັນລາຍລັກອັກສອນ ແລະ ມີເນື້ອໃນຈະແຈ້ງ.
   - ພາລະບົດບາດຂອງສະຖາບັນການສຶກສາໄດ້ຖືກເຜີຍແຜ່ຜ່ານເວັບໄຊຂອງສະຖາບັນ ຫລືຜ່ານເອກະສານແນະນຳສະຖາບັນ ເພື່ອໃຫ້ສັງຄົມຮັບຮູ້.
   - ພາລະບົດບາດຂອງສະຖາບັນການສຶກສາໄດ້ຮັບການຮັບຮູ້ໂດຍ ຄູອາຈານ ນັກສຶກສາ ພະນັກງານ.
   - ພາລະບົດບາດຂອງສະຖາບັນການສຶກສາ ເໝາະສົມກັບບົດບາດໜ້າທີ່ ແລະ ແທດເໝາະກັບທ່າແຮງ ແລະທິດທາງການພັດທະນາຂອງຕົນເອງ.
   - ພາລະບົດບາດຂອງສະຖາບັນການສຶກສາ ແທດເໝາະ ແລະ ຕອບສະໜອງ ໃຫ້ແກ່ຍຸດທະສາດການພັດທະນາເສດຖະກິດສັງຄົມ

# ມາດຖານຄຸນນະພາບຂອງລາວ (5)

- ພາລະບົດບາດ ແລະຈຸດໝາຍກໍ່ສ້າງ

2. ຈຸດໝາຍກໍ່ສ້າງຂອງສະຖາບັນການສຶກສາ ຕ້ອງແທດເໝາະກັບ ຈຸດໝາຍການກໍ່ສ້າງຂອງອາຊີວະສຶກສາວິຊາຊີບຊັ້ນສູງ ຕາມກົດໝາຍ ວ່າດ້ວຍການສຶກສາ ແລະສອດຄ່ອງກັບພາລະໜ້າທີ່ຂອງສະຖາບັນ ການສຶກສາ ທີ່ໄດ້ປະກາດໄວ້; ມີການກວດກາ, ເພີ່ມເຕີມ, ປັບປຸງ ແລະມີການຜັນຂະຫຍາຍຈັດຕັ້ງປະຕິບັດ ຕາມໄລຍະເວລາກໍານົດ.
    - ມີໃບອະນຸຍາດຈາກກະຊວງ ກ່ຽວກັບຈຸດໝາຍການກໍສ້າງ
    - ມີບັນດາບົດລາຍງານ ກ່ຽວກັບການກວດກາ, ເພີ່ມເຕີມ, ປັບປຸງ ກ່ຽວກັບເປົ້າໝາຍ ຂອງສະຖາບັນການສຶກສາ
    - ມີແຜນງານ ການຜັນຂະຫຍາຍຈຸດໝາຍ ເປັນບັນດາໜ້າທີ່ ທີ່ເປັນຮູບປະທໍາ

# ຕົວຢ່າງຂອງຕົວຊີ້ບອກ

1. ເປີເຊັນຂອງຜູ້ໄດ້ວຽກພາຍໃນ1ປີ ແລະເປີເຊັນຂອງຜູ້ຮຽນຕໍ່
2. ລະດັບຄວາມພໍໃຈຂອງຜູ່ຈ້າງ
3. ອາຈານປະຈໍາທຸກລະດັບ ຕໍ່ຈໍານວນນັກສຶກສາເຕັມເວລາທຽບເທົ່າ
4. ຄ່າໃຊ້ຈ່າຍທັງຫມົດ ຕໍ່ນັກສຶກສາເຕັມເວລາທຽບເທົ່າ
5. ເປີເຊັນຂອງອາຈານປະຈໍາທີ່ມີວຸດທິປະລິນຍາເອກ ຫລືທຽບເທົ່າ
6. ຈໍານວນຄອມພິວເຕີທີ່ໃຊ້ໃນການຮຽນການສອນ ຕໍ່ຈໍານວນນັກສຶກສາເຕັມເວລາທຽບເທົ່າ
7. ຄ່າໃຊ້ຈ່າຍທັງຫມົດທີ່ໃຊ້ກັບຫ້ອງສະຫມຸດ ແລະສູນໄອທີ ຕໍ່ນັກສຶກສາເຕັມເວລາທຽບເທົ່າ
8. ຈໍານວນບົດວິໄຈທີ່ພິມເຜີຍແຜ່ ຕໍ່ຈໍານວນອາຈານປະຈໍາ
9. ຈໍານວນງານວິໄຈທີ່ຖືກເອົາໄປໃຊ້ປະໂຫຍດ ຕໍ່ອາຈານປະຈໍາ
10. ຈໍານວນເງິນສະຫນັບສະຫນູນງານວິໄຈ ຕໍ່ອາຈານປະຈໍາ
11. ເປີເຊັນຂອງເງິນເດືອນບຸຄະລາກອນທຸກປະເພດ ຕໍ່ຄ່າໃຊ້ຈ່າຍທັງຫມົດ
12. ເປີເຊັນຂອງເງິນເດືອນພະນັກງານໃນການບໍລິຫານຈັດການ ຕໍ່ຄ່າໃຊ້ຈ່າຍທັ້ງຫມົດ
13. ເປີເຊັນຂອງຄ່າໃຊ້ຈ່າຍໃນການບໍລິຫານຈັດການຂອງສ່ວນກາງ ຕໍ່ຄ່າໃຊ້ຈ່າຍທັງຫມົດ
14. ຄ່າຫລຸ້ຍຫ້ຽນທັງຫມົດ ຕໍ່ຈໍານວນນັກສຶກສາ ເຕັມເວລາທຽບເທົ່າ
15. ເປີເຊັນຂອງເງິນເຫລືອຈ່າຍ ຕໍ່ງົບດໍາເນີນງານ

# ສິ່ງທີ່ຈະໄດ້ພິຈາລະນາໃນຕໍ່ຫນ້າຂອງແຕ່ລະມາດຖານ

ຕົວຢ່າງ:

| ມາດຖານ | ມາດຖານຍ່ອຍ | ຕົວຊີ້ບອກ |
|---|---|---|
| ຈຸດຫມາຍກໍ່ສ້າງ | - ມີເນື້ອໃນຈະແຈ້ງ | - ເປັນລາຍລັກອັກສອນ |
| | - ສອດຄ່ອງ | - ໄດ້ຮັບອະນຸຍາດ |
| | - ໄດ້ເຜີຍແຜ່ | - ມີເອກະສານແນະນຳ |
| | | - ໄດ້ເອົາຂຶ້ນອິນເຕີເນັດ |
| | - ອ້ອມຂ້າງຮັບຮູ້ | - ນັກສຶກສາ/ຄູອາຈານ |
| | | - ສັງຄົມ |
| | - ມີການປັບປຸງ | - ມີເອກະສານບົ່ງບອກ |

# ຂໍຂອບໃຈ